ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 21 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 13 ພຶດສະພາ 2016

ສຳນັກງານ ຄຄຊ
ເລກທີ...............
ວັນທີ 17 MAY 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 01/05/2016 ຫາ 06/05/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກການສັ່ງຊື້ສິນຄ້າອຸດສາຫະກຳຂອງ ສ.ອາເມລິກາ ເພີ່ມຂຶ້ນ 1,1% ໃນເດືອນ 3/2016 ເມື່ອທຽບໃສ່ເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/04/2016 | ອາທິດນີ້ 06/05/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1531 | 1,1410 | 1,06% |
| ໂດລາ/ເຢນ | 106,11 | 107,05 | -0,88% |
| ໂດລາ/ບາດ | 34,86 | 35,15 | -0,82% |
| ໂດລາ/ເປໂຊ | 47,04 | 47,21 | -0,36% |
| ໂດລາ/ຣູເປັຍ | 13.175,00 | 13.240,00 | -0,49% |
| ໂດລາ/ໂດລາສິງກະໂປ | 1,3395 | 1,3592 | -1,45% |
| ໂດລາ/ຢວນ | 6,4738 | 6,5029 | -0,45% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 1,65% ຈາກ 46,50 ໂດລາ/ບາເຣວ ມາເປັນ 45,73 ໂດລາ/ບາເຣວ ຍ້ອນນັກລົງທຶນໝັ້ນໃຈຕໍ່ການສະໜອງນ້ຳມັນ ພາຍຫຼັງປະເທດອີຣັກສົ່ງອອກນ້ຳມັນເພີ່ມຂຶ້ນ 0,08 ລ້ານບາເຣວ/ວັນ ເປັນ 3,36 ລ້ານບາເຣວ/ວັນ ໃນເດືອນ 4/2016 ເມື່ອທຽບເດືອນຜ່ານມາ ບວກກັບປະເທດຊາອຸດີອາລາບີມີແຜນຈະຜະລິດນ້ຳມັນດິບເພີ່ມຂຶ້ນຈາກ

10,2-10,3 ລ້ານບາເຣວ/ວັນ ເປັນ 10,5 ລ້ານບາເຣວ/ວັນ. ສໍາລັບລາຄາຄໍາໃນຕະຫຼາດໂລກຫຼຸດລົງ 0,92% ຈາກ 1.290,66 ມາເປັນ 1.278,75 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,08% ສໍາລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,07% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,86% ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,20% ສໍາລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,54% ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,84% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,29% ສໍາລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,37% ສໍາລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/04/2016 | | | ອາທິດນີ້ 06/05/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.094,22 | 8.132,01 | 8.102,30 | 8.095,02 | 8.125,00 | 8.108,94 | -0,01% | 0,09% | -0,08% |
| ບາດ | 231,72 | 233,42 | 233,29 | 230,58 | 231,38 | 231,29 | 0,50% | 0,88% | 0,86% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.122,00 | 8.155,93 | 8.138,97 | 8.119,67 | 8.146,33 | 8.133,00 | 0,03% | 0,12% | 0,07% |
| ບາດ | 231,98 | 233,08 | 232,53 | 231,44 | 232,70 | 232,07 | 0,24% | 0,17% | 0,20% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,34% | 0,29% | 0,45% | 0,30% | 0,26% | 0,30% | | | |
| ບາດ | 0,11% | -0,14% | -0,32% | 0,37% | 0,57% | 0,34% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈໍາອາທິດນີ້ຫຼຸດລົງ 0,34% ທຽບໃສ່ວັນທີ 29/04/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12,76%;
- ປະລິມານເງິນ M2 ຫຼຸດລົງ 0,29% ເມື່ອທຽບໃສ່ວັນທີ 29/04/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,74%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາອາທິດ (ວັນທີ 06/05/2016) ເຫັນວ່າ ທຫກ ຂາຍໂດລາສຸດທິ 7,30 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 34,84 ລ້ານໂດລາ ແລະ ຂາຍໂດລາໄດ້ 42,14 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 651,46 ລ້ານບາດ (ໃນນີ້ ຊື້ບາດໄດ້ 158,38 ລ້ານບາດ ແລະ ຂາຍບາດໄດ້ 809,84 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 67,06% ແຕ່ເພີ່ມຂຶ້ນ 67,56% ສໍາລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 0,20 ລ້ານໂດລາ ແລະ ເງິນບາດມີຈໍານວນ 47,20 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 19,03 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,24 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 0,18 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/04/2016 | | ອາທິດທີ 06/05/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **140,09** | **213,31** | **34,84** | **158,38** | **-75,13%** | **-25,75%** |
| - ທ/ຄທຸລະກິດລັດ | 18,19 | 97,09 | 8,07 | 110,35 | -55,61% | 13,66% |
| - ທ/ຄທຸລະກິດອື່ນໆ | 121,90 | 116,22 | 26,77 | 48,03 | -78,04% | -58,67% |
| 2. ການຂາຍເງິນຕາຕ່າງປະເທດ | **93,60** | **364,55** | **42,14** | **809,84** | **-54,97%** | **122,15%** |
| - ທ/ຄທຸລະກິດລັດ | 19,77 | 126,15 | 15,45 | 194,05 | -21,86% | 53,83% |
| - ທ/ຄທຸລະກິດອື່ນໆ | 73,83 | 238,40 | 26,70 | 615,80 | -63,84% | 158,31% |
| ຊື້-ຂາຍສຸດທິ ທທກ | **46,49** | **-151,24** | **-7,30** | **-651,46** | **-115,70%** | **330,75%** |
| ຜິດດ່ຽງ ຊື້-ຂາຍ | 33,18% | -70,90% | -20,95% | -411,32% | | |
| ມູນຄ່າການຊື້-ຂາຍ | **233,69** | **577,85** | **76,99** | **968,23** | **-67,06%** | **67,56%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-25,60** | **15,00** | **-19,03** | **-50,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 15,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 25,60 | 0,00 | 19,03 | 50,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,46** | **72,50** | **0,20** | **47,20** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | -10,43 | 366,48 | 0,24 | 0,18 | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 1.162,82 | 0,25 | 0,23 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 10,48 | 796,33 | 0,01 | 0,04 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2016 ຢູ່ໃນລະດັບ 0,6% (ຕົວເລກຄາດຄະເນ) ຫຼຸດລົງ 0,36% ຈາກ 0,96% ໃນເດືອນ 04/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 47,81 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 84,5% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 740 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 18,14% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 462,19 ຕື້ກີບ ຫຼຸດລົງ 38,19% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (29/04-5/05/2016) ມີຈຳນວນ 1.884 ຄັ້ງ ໂດຍມີມູນຄ່າ 483,59 ຕື້ກີບ ຫຼຸດລົງ 1,64% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 446 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ (ຄັ້ງວັນທີ 05 ພຶດສະພາ 2016) ປິດຢູ່ທີ່ 1.140,81 ຈຸດ ເພີ່ມຂຶ້ນ 1,76% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 93.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 439,88 ລ້ານກີບ ຫຼຸດລົງ 65,82% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 52,07% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.615 ກີບ/ຮຸ້ນ ເພີ່ມຂຶ້ນ 397 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 54.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 252,92 ລ້ານກີບ ຫຼຸດລົງ 79,32% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 61,79% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,24%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.716 ກີບ/ຮຸ້ນ ເພີ່ມຂຶ້ນ 66 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 28.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 160,05 ລ້ານກີບ ເພີ່ມຂຶ້ນ 164,75% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 48,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.613 ກີບ/ຮຸ້ນ ຫຼຸດລົງ 37 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 26,91 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 69,20% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມສ່ອງແສງສາຍລັດປະຈຳເດືອນ 4/2016;
- ສຳເລັດການເຂົ້າຮ່ວມ: ❶ກອງປະຊຸມຊ່ອງໜ້າ (Face to Face Meeting) ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ Action Plan ກ່ຽວກັບວຽກງານ AML/CFT ທີ່ປະເທດ ມຽນມາ, ❷ກອງປະຊຸມຄະນະຊີ້ນຳຂັ້ນສູນກາງ ຄັ້ງທີ II ຂອງໂຄງການລ້ຽງສັດເພື່ອຜະລິດເປັນສິນຄ້າຢູ່ເຂດພາກເໜືອຂອງ ສປປ ລາວ ທີ່ ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງແຂວງ; ❸ກອງປະຊຸມປຶກສາຫາລື ແລະ ຄົ້ນຄວ້າກ່ຽວກັບຮ່າງລະບຽບຄຸ້ມຄອງການປະຕິບັດນະໂຍບາຍຕໍ່ພະນັກງານໃນການພັດທະນາໂປຼແກມຕ່າງໆ ເພື່ອຮັບໃຊ້ວຽກງານສະເພາະຂອງ ທຫລ, ❹ກິດຈະກຳ "ທັດສະນະສຶກສາແລກປ່ຽນບົດຮຽນກັບ ສສງ ຂອງປະເທດໄທ ຂອງຄະນະສະພາບໍລິຫານ ສສງ ເຂດປາກທອນ ທີ່ປະເທດໄທ;

---

ລາຄາສະເລ່ຍແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສໍາເລັດການສ້າງປື້ມ "ຄວາມສໍາຄັນຂອງເງິນກີບຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ";
- ສໍາເລັດການກະກຽມເນື້ອໃນ ແລະ ຕິດຕາມຄະນະນໍາ ທຫລ ເຂົ້າຮ່ວມກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 ທີ່ເມືອງ ແຟງເຟີດ ປະເທດເຢຍລະມັນ;
- ສໍາເລັດການເຂົ້າຮ່ວມຂະບວນການຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນກໍາມະກອນສາກົນຄົບຮອບ 130 ປີ ທີ່ປະຕູໄຊ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ສ້າງລະບຽບວ່າດ້ວຍສູນຊໍາລະສະສາງ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກໍານົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພົມມະກອນ